ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0350 /ທຄຕລ. 2025
ນະຄອນຫຼວງວຽງຈັນ, ວັນທີ: 03 FEB 2025

## ໜັງສືແຈ້ງການ

**ເຖິງ:** ບັນດາຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ນັກລົງທຶນ ທີ່ເຄົາລົບ ແລະ ນັບຖື,

**ເລື່ອງ:** ການໂຈະການຊື້-ຂາຍຮຸ້ນ ທຄຕລ ຊົ່ວຄາວ ໃນລະຫວ່າງວັນທີ 11-14 ແລະ 17 ກຸມພາ 2025

- ອີງຕາມການແຈ້ງການກ່ຽວກັບແຜນການປັບປຸງມູນຄ່າກຳນົດຮຸ້ນ ຂອງ ທຄຕລ ລົງວັນທີ 17/01/2025
- ອີງຕາມໜັງສືແຈ້ງຕອບຈາກຕະຫຼາດຫຼັກຊັບລາວ ວ່າດ້ວຍການປັບປຸງມູນຄ່າກຳນົດ ສະບັບເລກທີ 135/ຕລຊລ, ລົງວັນທີ 31/01/2025.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ ພາຍຫຼັງ ທຄຕລ ສຳເລັດການປະກອບເອກະສານການປັບປຸງມູນຄ່າກຳນົດຮຸ້ນ ທຄຕລ ຢ່າງເປັນທາງການໃຫ້ແກ່ຕະຫຼາດຫຼັກຊັບລາວ ຕາມລະບຽບການ, ດ້ວຍເຫດນີ້ ເພື່ອໃຫ້ສຳເລັດການປັບປຸງມູນຄ່າກຳນົດຮຸ້ນດັ່ງກ່າວ ຕະຫຼາດຫຼັກຊັບລາວ ຈະໄດ້ໂຈະການການຊື້-ຂາຍຮຸ້ນ ທຄຕລ ຊົ່ວຄາວໃນວັນທີ 11-14 ແລະ 17 ກຸມພາ 2025, ແລະ ຈະໄດ້ເປີດໃຫ້ບໍລິການຊື້-ຂາຍຮຸ້ນຂອງ ທຄຕລ ປົກກະຕິໃນວັນທີ 18 ກຸມພາ 2025.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 137 /ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ 03 FEB 2025

# ແຈ້ງການ

ເຖິງ: ສະມາຊິກຂອງຕະຫຼາດຫຼັກຊັບລາວ, ຜູ້ລົງທຶນ ແລະ ຜູ້ຖືຮຸ້ນຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: **ໂຈະການຊື້ ຂາຍຮຸ້ນຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອດຳເນີນການແຕກຮຸ້ນ (Stock Split)**

- ອີງຕາມ ແຈ້ງການຂັ້ນຕອນປະຕິບັດກ່ຽວກັບການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສະບັບປັບປຸງ), ເລກທີ 1456/ຕລຊລ, ລົງວັນທີ 2 ພະຈິກ 2023;
- ອີງຕາມ ໜັງສືສະເໜີການຂໍແຕກຮຸ້ນຂອງ ທຄຕລ, ເລກທີ 0219/ທຄຕລ, ລົງວັນທີ 21 ມັງກອນ 2025.

ຕະຫຼາດຫຼັກຊັບລາວ (ຕລຊລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ອີງຕາມໜັງສືສະເໜີຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ກ່ຽວກັບການດຳເນີນການປ່ຽນແປງມູນຄ່າກຳນົດ ຫຼື ການແຕກຮຸ້ນ (Stock Split) ຈາກມູນຄ່າ 5,000 ກີບຕໍ່ຮຸ້ນ ມາເປັນ 1,000 ກີບຕໍ່ຮຸ້ນ. ສະນັ້ນ, ອີງຕາມລະບຽບການທີ່ກ່ຽວຂ້ອງ ຕລຊລ ຈະດຳເນີນການໂຈະການຊື້ ຂາຍຮຸ້ນ ຂອງ ທຄຕລ ແລະ ຂຶ້ນເຄື່ອງໝາຍ "H" ເປັນເວລາ 5 ວັນຊື້ ຂາຍ ຊຶ່ງກົງກັບວັນທີ **11 ຫາ 14 ແລະ 17 ກຸມພາ 2025** ເພື່ອດຳເນີນການແຕກຮຸ້ນຕາມການສະເໜີຂອງ ທຄຕລ.

ຫຼັງຈາກນັ້ນ, ຕລຊລ ຈະເປີດການຊື້ ຂາຍຮຸ້ນ ທຄຕລ ຄືນໃນວັນທີ **18 ກຸມພາ 2025** ເປັນຕົ້ນໄປ ເພື່ອໃຫ້ຜູ້ລົງທຶນສາມາດຊື້ ຂາຍຮຸ້ນໄດ້ຢ່າງເປັນປົກກະຕິ.




ນອກຈາກນີ້, ຕລຊລ ຈະດຳເນີນການປ່ຽນແປງຈຳນວນຮຸ້ນທີ່ຈົດທະບຽນ, ມູນຄ່າກຳນົດ, ລາຄາຖານ ແລະ ລາຄາຕະຫຼາດຂອງຮຸ້ນ ທຄຕລ ຄືນໃໝ່, ຊຶ່ງຈະມີຜົນ ນັບຕັ້ງແຕ່ວັນທີ **18 ກຸມພາ 2025** ເປັນຕົ້ນໄປ. ການປ່ຽນແປງດັ່ງກ່າວ ແມ່ນຈະບໍ່ມີຜົນຕໍ່ສັດສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນເດີມ ແລະ ມູນຄ່າຕະຫຼາດຂອງ ທຄຕລ.

ຕາຕະລາງ: ຂໍ້ມູນກ່ອນ ແລະ ຫຼັງການດຳເນີນການແຕກຮຸ້ນ ທຄຕລ

| ລາຍການ | ກ່ອນການແຕກຮຸ້ນ (10 ກຸມພາ 2025) | ຫຼັງການແຕກຮຸ້ນ (18 ກຸມພາ 2025) |
|---|---|---|
| ອັດຕາສ່ວນການປ່ຽນແປງ | 1:1 | 1:5 |
| ມູນຄ່າກຳນົດຕໍ່ຮຸ້ນ (Par Value) | 5,000 | 1,000 |
| ຈຳນວນຮຸ້ນຈົດທະບຽນ | 207,723,300 | 1,038,616,500 |
| ລາຄາຖານ | ລາຄາປິດຂອງວັນທີ 10 ກຸມພາ | ຫຼຸດລົງ (1:5) |
| ລາຄາຕະຫຼາດ | ລາຄາປິດຂອງວັນທີ 10 ກຸມພາ | ຫຼຸດລົງ (1:5) |
| ມູນຄ່າຕະຫຼາດ | ມູນຄ່າຕະຫຼາດຂອງ 10 ກຸມພາ | ບໍ່ປ່ຽນແປງ |

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເປັນບ່ອນອີງຕາມທາງຄວນດ້ວຍ.

ຜູ້ອຳນວຍການໃຫຍ່



ສຽວສະຫວາດ ທີລະກຸນ